# ແຜນງານພັດທະນາເຂດເນີນສູງພາກເໜືອ

## ບົດຮຽນ ແລະ ຂໍ້ສັງເກດຕ່າງໆ ທີ່ຄັດຈ້ອນໄດ້

*Luang Prabang, 12-14 March 2018*

# ນະໂຍບາຍແຮງຍູ້ ແລະ ນະໂຍບາຍແຮງດຶງ

## ຜົນກະທົບຕໍ່ລະບົບກະສິກຳ ແລະ ຊີວິດການເປັນຢູ່ເຂດເນີນສູງ

### ແຮງຍູ້

**ຮູບແບບ**
**ການຜະລິດ ກະສິກຳ**

- ການເຮັດໄຮ່ ແບບດັ້ງເດີມ (ໄຮ່ເລື່ອນລອຍ)
- ການເຮັດນາ

### ຍູ້-ດຶງ (ຊັກຊວນ)

- ການປູກພືດໝູນວຽນ ແບບຄົງທີ່
- ການລ້ຽງສັດລ້ຽງໃຫຍ່ (ສັດກ້ຽວເອື້ອງ) ແບບສຸມ

### ດຶງ (ຊັກຊວນ)

- ການປູກພືດເສດຖະກິດ ຊະນິດດຽວ
- ການປູກຕົ້ນໄມ້ອຸດສາຫະກຳ

---

- ການຫຼຸດຜ່ອນການເຮັດໄຮ່ເລື່ອນລອຍ
- ການລົບລ້າງການປູກຝິ່ນ
- ການມອບດິນມອບປ່າ
- ການພັດທະນາເຂດຈຸດສຸມ
- 4 ເປົ້າໝາຍ ແລະ 13 ມາດຕະການ

**ຜົນໄດ້ຮັບ**

- ໂອກາດເປີດກວ້າງຕະຫຼາດ ບາງປະເພດ ເພີ່ມຂຶ້ນ
- ການຜະລິດທີ່ບໍ່ຍືນຍົງ (ເຊັ່ນ: ປູກສາລີ ຊະນິດດຽວ..)
- ການບຸກລຸກປ່າໄມ້ ແລະ ປ່ຽນແປງ ລະດັບຂອງທັດສະນີຍະພາບ
- ການຄໍ້າປະກັນສະບຽງອາຫານ ບໍ່ພຽງພໍ ຢູ່ບາງເຂດ
- ການພັດທະນາ ແບບເລືອກເຟັ້ນ

- ການຄ້າຂ້າມແດນ
- ການລົງທຶນຂະໜາດໃຫຍ່ໃນຂົງເຂດ
- ການຄ້າຂາຍພາຍໃນທ້ອງຖິ່ນຖິ່ນ ແລະ ການເພີ່ມມູນຄ່າ
- ການເຮັດສັນຍາກັບຊາວກະສິກອນ
- ການລົງທຶນ ດ້ານພະລັງງານ ແລະ ບໍ່ແຮ່

# ຄວມພະຍາຍາມຂອງແຜນງານ (ຜພນພ) ເພື່ອໃຫ້ບັນລຸໄດ້

## ນະໂຍບາຍທາງເລືອກເພື່ອຍົກລະດັບ ກະສິກຳເຂດເນີນສູງ

**ລະບົບການຜະລິດ ແບບກຸ້ມກິນ** | **ລະບົບການຜະລິດ ຕາມຄວາມຕ້ອງການຂອງຕະຫຼາດ**

**ຂະບວນການ ໃນໄລຍະຂ້າມຜ່ານ**

ການປັບຕົວ, ມາດຕະການຫຼຸດຜ່ອນ, ການຕິດຕາມ

### ການສະໜັບສະໜູນທາງເລືອກ ລະບົບກະເສດແບບຫຼາກຫຼາຍ

- ສະໜອງ ທາງເລືອກ ສຳລັບ ລະບົບກະສິກຳ ແບບຫຼາກຫຼາຍ
- ສ້າງຄວາມສົມດູນ ລະຫວ່າງ ການຄ້ຳປະກັນສະບຽງອາຫານ ແລະ ການຜະລິດສິນຄ້າ
- ສ່ງເສີມ ການຄົ້ນຄວ້າ ເພື່ອ ການປັບຕົວ ໃສ່ເຂດເນີນສູງ

### ການເຊື່ອມໂຍງ ການຜະລິດ ຕາມ ຄວາມຕ້ອງຂອງຕະຫຼາດ

- ເຊື່ອມໂຍງ ການຄ້າໃນ ຂົງເຂດ
- ເຊື່ອມໂຍງກັບພາກ ເອກະຊົນ
- ລະບົບຂໍ້ມູນຂ່າວສານ ການຕະຫຼາດ

### ສົ່ງເສີມທຸລະກິດກະສິກຳຢູ່ ທ້ອງຖິ່ນ ແລະ ພື້ນຖານໂຄງ ລ່າງ ແບບງ່າຍດາຍ

- ປັບປຸງ ການປຸງແຕ່ງ, ການເກັບມ້ຽນ ແລະ ເພີ່ມມູນຄ່າ ຢູ່ທ້ອງຖິ່ນ
- ປັດໃຈພື້ນຖານ: ຖະໜົນ ຫົນທາງ, ນ້ຳ, ການສຶກສາ ແລະ ສາທາລະນະສຸກ

### ການປັບປຸງ ກົນໄກ ການສົ່ງເສີມ ຂອງສະຖານ ບັນຕ່າງໆ

- ສ້າງລະບຽບການ ແລະ ສິ່ງຈູງໃຈ
- ການນິເທດ ລະບົບການ ສົ່ງເສີມ ຄືນໃໝ່
- ຫັນເອົາລະບົບການ ຄົ້ນຄວ້າ ລົງສູ່ທ້ອງຖິ່ນ

# ແຜນງານ ເຂດເນີນສູງ ຂອງ ສປປ ລາວ




**ຈຸດປະສົງ**

1. ການພັດທະນາຊົນນະບົດ ແບບປະສົມປະສານ ທີ່ໄດ້ສ້າງຂຶ້ນນັ້ນ ຖືວ່າເປັນຂັ້ນຕອນການລຶບລ້າງຄວາມທຸກຍາກ ຢູ່ເຂດເນີນສູງ
2. ການຄ້ຳປະກັນ ສະບຽງອາຫານ ແລະ ໂພຊະນາການ ແມ່ນໄດ້ມາຈາກ ການຍົກລະດັບຊີວິດການເປັນຢູ່ ແລະ ຮັບປະກັຣລາຍຮັບຂອງປະຊາຊົນ
   - ຮັບປະກັນ ໂດຍຜ່ານການຜະລິດອາຫານທີ່ເພີ່ມຂຶ້ນ ແລະ ການເສີມສ້າງລາຍຮັບ ທີ່ຕິດພັນກັບຕະຫຼາດ
3. ການສ້າງຄວາມເຂັ້ມແຂງ ຂອງອຳນາດການປົກຄອງທ້ອງຖິ່ນໄດ້ເອື້ອອຳນວຍ ໃຫ້ວຽກງານຫັນລົງສູ່ທ້ອງຖິ່ນ ເພື່ອກ້າວໄປສູ່ເປົ້າໝາຍດັ່ງນີ້:
   - ປະສິດທິພາບ ແລະ ປະສິດທິຜົນ ຂອງການບໍລິການພາກລັດ ໄ◌້ດ້ຮັບການປັບປຸງ
   - ສ້າງສະພາບແວດລ້ອມທີ່ດີ ເອື້ອອຳນວຍ ໃຫ້ແກ່ພາກເອກະຊົນ ແລະພາກປະຊາຊົນ ຢູ່ເຂດເນີນສູງ
   - ເສີມຂະຫຍາຍ ທ່າແຮງດ້ານການພັດທະນາຂອງທ້ອງຖິ່ນ ຢ່າງເຕັມສ່ວນ
4. ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ: ການອະນຸລັກ ແລະ ການນຳໃຊ້ການກະເສດຊີວະນານາພັນ

# ບົດຮຽນທີ່ຖອດຖອນໄດ້

## ການຄຸ້ມຄອງດິນ ແລະ ທັດສະນີຍະພາບ

- **ວິທີການວາງແຜນນໍາໃຊ້ດິນ** ຕ້ອງໃຫ້ກະທັດລັດ ໂດຍຄໍານຶງເຖິງຂໍ້ຈໍາກັດດ້ານຊັບພະຍາກອນຂອງ ອີງການຄຸ້ມຄອງ.
- **ການວາງແຜນນໍາໃຊ້ດິນ** ຕ້ອງປະສົມປະສານກັບ **ແຜນພັດທະນາບ້ານ** ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງ.
- **ການວາງແຜນນໍາໃຊ້ດິນ ແລະ ການຂຶ້ນທະບຽນດິນລວມໝູ່** ແມ່ນທ່າແຮງໃນການເພີ່ມຄວາມເຊື່ອໝັ້ນແກ່ຊຸມຊົນຢູ່ເຂດເນີນສູງ ແລະ ຄາດວ່າຈະໄດ້ຮັບການສະໜັບສະໜູນຈາກນະໂຍບາຍໃໝ່ກ່ຽວກັບດິນ ແລະ ນິຕິກໍາທີ່ຕິດພັນ.
- **ການຂຶ້ນທະບຽນ ທີ່ດິນສ່ວນບຸກຄົນຢ່າງເປັນລະບົບ** ໃນເຂດຊົນນະບົດແມ່ນມີຄວາມສິ້ນເປືອງຫຼາຍ ແລະໃຊ້ເວລາຫຼາຍປີກ່ອນຈະສໍາເລັດ; ເຖິງຢ່າງນີ້ກໍຕາມທີ່ດິນທີ່ຂຶ້ນທະບຽນນີ້ ໄດ້ກາຍເປັນຊັບສິນຄໍ້າປະກັນການກູ້ຢືມ ແລະ ຊຸກຍູ້ໃຫ້ການລົງທຶນໃສ່ດິນນັ້ນ ເພີ່ມຂຶ້ນ.

# ບົດຮຽນທີ່ຖອດຖອນໄດ້

## ການປົກຄອງຂັ້ນທ້ອງຖິ່ນ ແລະ ການວາງແຜນ

- **ແຜນພັດທະນາບ້ານ** ແລະ **ກິດຈະກໍາພັດທະນາບ້ານ** ຕ້ອງປະສົມປະສານກັນ ແລະ ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມຂອງເມືອງດັ່ງສັງ.
- ກ່ອນການສ້າງ**ແຜນພັດທະນາບ້ານ**, ຜູ້ລິເລີ່ມເອື້ອອໍານວຍແກ່ການສ້າງແຜນ ແລະ ພະນັກງານ ຂອງຂະແໜງການກ່ຽວຂ້ອງ ຕ້ອງໄດ້ເຂົ້າໃຈເຖິງ **ນະໂຍບາຍຂະແໜງການ ທີ່ຕິດພັນ**, ແຜນການ, ດໍາລັດ ແລະ ຂໍ້ສະເໜີ ລວມທັງແຜນການທີ່ກໍາລັງຈັດຕັ້ງຢູ່ ຂອງພາກເອກະຊົນນັ້ນ ໃຊ້ເປັນບ່ອນອີງ ໃນການວາງແຜນພັດທະນາກິດຈະກໍາຕ່າງໆ.
- ວິທີການທີ່ດີກວ່າ ແມ່ນມີການແລກປ່ຽນ **ແຜນພັດທະນາບ້ານ** ລະຫວ່າງ **ຜູ້ຮ່ວມບົດບາດພັດທະນາດ້ວຍກັນ** ເພື່ອ **ຫຼີກລ້ຽງການຊໍ້າຊ້ອນ** ໃນຄວາມພະຍາຍາມໃນການວາງແຜນ ແລະ ສ້າງຄວາມສັບສົນ ແລະ ຊຸກຍູ້ ໃຫ້ມີການຈັດຕັ້ງປະຕິບັດກິດຈະກໍາທີ່ເປັນບູລິມະສິດ.
- **ແຜນພັດທະນາບ້ານ** ຈະຕ້ອງກວມເອົາ **ການຄຸ້ມຄອງ ຊັບພະຍາກອນທໍາມະຊາດ ແບບຍືນຍົງ, ການຟື້ນຟູທີ່ດິນ, ການກໍ່ສ້າງໂຄງລ່າງທີ່ເປັນມິດກັບດິນຟ້າອາກາດ, ການກະສິກໍາ ທີ່ມີຄູນຄ່າດ້ານໂພຊະນາການ.**

# ບົດຮຽນທີ່ຖອດຖອນໄດ້
## ການຈັດຕັ້ງຂອງຊາວກະສິກອນ

- **ກຸ່ມຊາວກະສິກອນ** ຢູ່ບັນດາເມືອງຫ່າງໄກສອກຫີກ ເຂດເນີນສູງ, ໂດຍທົ່ວໄປເປັນ **ການພັດທະນາອີງການ ທີ່ຍັງບໍ່ທັນກ້າວໜ້າ**, ປັດໃຈນີ້ ຄວນຖືກຮັບຮູ້ເຂົ້າໃນຂະບວນການສະໜອງທຶນຊ່ວຍເຫຼືອລ້າ ແລະ ເງື່ອນໄຂດ້ານການປະເມີນ.

- **ກຸ່ມຊາວກະສິກອນ ຕ້ອງການຝຶກອົບຮົມ/ການສະໜັບສະໜູນຊ່ວຍເຫຼືອ**ໃນການການກຽມບົດສະເໜີ, ການຄຸ້ມຄອງການເງິນ ແລະການເກັບມ້ຽນເອກະສານຕ່າງໆ.

- **ການຊ່ວຍເຫຼືອລ້າ ເປັນທຶນຂະໜາດນ້ອຍໃຫ້ກຸ່ມຊາວກະສິກອນ** ແລະ ການບັນຈຸເຂົາເຈົ້າເຂົ້າໃນກິດຈະກຳການພັດທະນາກະສິກຳ ຂອງພາກເອກະຊົນ, ສາມາດເປັນຕົວກະຕຸ້ນ ແລະ ກະຕຸກຊຸກຍູ້ ຍົກລະດັບການຄຸ້ມຄອງ; ແຜນງານສະໜອງທຶນຊ່ວຍເຫຼືອລ້າ ແລະ ຟື້ນຟູຊີວິດການເປັນຢູ່ ຍັງຊຸກຍູ້ການປ່ຽນແປງດ້ານພຶດຕິກຳອີກ (ຕົວຢ່າງ: ການຄຸ້ມຄອງດິນສວ່ນລວມ ເພື່ອລ້ຽງສັດປ່ອຍ ໄດ້ດີກວ່າເກົ່າ, ການຕະຫຼາດລວມໝູ່, ການລົງທຶນລວມໝູ່, ການຄຸ້ມຄອງຊັບສົມບັດ ເປັນຕົ້ນ)

# ບົດຮຽນທີ່ຖອດຖອນໄດ້

## ເສດຖະກິດ ຊົນນະບົດ ທີ່ທຸກຍາກ

- **ການສຶກສາ ຕ່ອງໂສ້ ການຕະຫຼາດ** ແມ່ນມີຄວາມສຳຄັນ ໃນການວາງແຜນ ວຽກງານ ສົ່ງເສີມ ແລະ ການຊ່ວຍເຫຼືອ ດ້ານຊີວິດການເປັນຢູ່ ທີ່ມີປະສິດທິພາບ.
- ບໍ່ແມ່ນວ່າ ທຸກ**ການສຶກສາ ຕ່ອງໂສ້ ການຕະຫຼາດ** ແມ່ນໄດ້ຄຸນນະພາບສູງທັງໝົດ. ມັນຍັງມີຄວາມຈຳເປັນຕ້ອງມີ **ການສົ່ງເສີມການປຶກສາຫາລືແລກປ່ຽນ ແລະ ການວິໃຈ** ລະຫວ່າງຜູ້ທີ່ມີສ່ວນກ່ຽວຂ້ອງດ້ວຍກັນ ແລະ ວາງແຜນຕາມພຶດຕິກຳຄວາມຕ້ອງການຂອງຕະຫຼາດ ທັງຖອດຖອນບົດຮຽນ ແລະ ປັບປຸງ ໂດຍອີງໃສ່ໂຄງການ ທີ່ຜ່ານມາ.
- **ການສຶກສາ ຕ່ອງໂສ້ ການຕະຫຼາດ** ສຳລັບສິນຄ້າເຂດເນີນສູງຫຼາຍປະເພດ **ເພື່ອຂ້າມແດນ** ຕ້ອງໄດ້ສຶກສາລະອຽດ ມີຄວາມສະຫຼັບຊັບຊ້ອນ ແລະ ມູນຄ່າສູງ.
- **ຫຼັກຖານທີ່ເປັນຜົນກະທົບ** ຈາກການພັດທະນາການສຶກສາຕ່ອງໂສ້ການຕະຫຼາດ ແລະ ການ ການສົ່ງເສີມຊີວິດການເປັນຢູ່ ທີ່ເຫັນໄດ້ ປະກອບມີ:
  - ການປັບປຸງ ຊີວິດການເປັນຢູ່,
  - ການເຂົ້າເຖິງສະບຽງອາຫານ ແລະ ຄວາມຫຼາກຫຼາຍດ້ານໂພຊະນາການ ຢູ່ໃນເຂດບ້ານເປົ້າໝາຍ ຂອງແຜນງານ (ຜພນໜ).

# ບົດຮຽນ ທີ່ຖອດຖອນໄດ້

## ການສົ່ງເສີມ ແລະ ບໍລິການດ້ານກະສິກໍາ

- ແຜນງານ (ຜພນໜ) ໄດ້ສ້າງລະບົບ **ການວາງແຜນການສົ່ງເສີມ, ການຂຶ້ນງົບປະມານ, ການຄຸ້ມຄອງ, ການຕິດຕາມ ແລະ ປະເມີນຜົນ ແລະ ການລາຍງານ** ໃຫ້ແກ່ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ຫ້ອງການກະສິກໍາ ແລະ ປ່າໄມ້ແຂວງ, ເຊິ່ງສາມາດໄປນໍາໃຊ້ກັບເມືອງ ແລະ ແຂວງອື່ນໆ (ສະຫນັບສະຫນູນ ວຽກງານ ສາມສ້າງ).
- ແຜນງານ (ຜພນໜ) ໄດ້ເຮັດວຽກຮ່ວມກັບ ພະນັກງານ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ, ຫ້ອງການກະສິກໍາ ແລະ ປ່າໄມ້ແຂວງ **ເພື່ອສ້າງຂີດຄວາມສາມາດໃຫ້ເຂົາເຈົ້າ** - ທີ່ບໍ່ແບບຄຽງຄູ່ກັນທີ່ມີລັກສະນະການບໍລິການຂອງທີ່ປຶກສາ ຫຼື  ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGOs).
- ຍ້ອນວ່າມີບຸກຄະລາກອນ, ການຊ່ວຍເຫຼືອດ້ານວິຊາການ (TA) ແລະ ການຝຶກອົບຮົມໃຫ້ເປົ້າໝາຍ ທີ່ມີຢູ່ແລ້ວ, **ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ໄດ້ກາຍເປັນຜູ້ຮັບສິດອໍານາດ** ແລະ ກາຍເປັນຜູ້ໃຫ້ບໍລິການສົ່ງເສີມຊາວກະສິກອນ ຢ່າງມີປະສິດທິຜົນ.
- **ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ** ປະສານສົມທົບ ກັບນັກລົງທຶນ ທຸລະກິດກະສິກໍາພາກເອກະຊົນ ແລະ ບໍລິສັດ ດ້ານທຶນຮອນ ເພື່ອຍົກລະດັບຊີວິດການເປັນຢູ່ຂອງຊາວກະສິກອນ ຢູ່ບັນດາເມືອງເປົ້າໝາຍ.

# ບົດຮຽນ ທີ່ຖອດຖອນໄດ້

## ການສົ່ງເສີມ ແລະ ບໍລິການດ້ານກະສິກຳ

- ຕ້ອງໃຫ້ມີເວລາ ແລະ ຊັບພະຍາກອນ **ເພື່ອພັດທະນາ ຂີດຄວາມສາມາດ** ໃຫ້ແກ່ທ້ອງຖິ່ນ.

- **ມັນໄດ້ສະແດງໃຫ້ເຫັນວ່າ TSC ສ່ວນຫຼາຍ ຍັງມີຄວາມຈຳກັດ** ໃນການປະຕິບັດກິດຈະກຳ: ມີພະນັກງານປະຈຳບໍ່ຫຼາຍ ແຕ່ວຽກລົ້ນມື, ມີງົບປະມານໜ້ອຍ ຫຼື ບໍ່ມີເປັນປົກກະຕິເລີຍ.

- ຂະບວນການພັດທະນາ ຂອງແຜນງານ (ຜພນໜ), TSC ແມ່ນໄດ້ຊຸກຍູ້ການພັດທະນາ ຂີດຄວາມສາມາດ ແລະ ຄົ້ນພົບ ຮູບແບບ **ການບໍລິການ ທີ່ຕອບສະໜອງ ຄວາມຕ້ອງການຂອງຊາວກະສິກອນ** ແລະ ມີລັກສະນະຍືນຍົງ.

# ບົດຮຽນ ທີ່ຖອດຖອນໄດ້
## ວິທີການຈັດຕັ້ງປະຕິບັດ ໂດຍຖືເອົາ ແຜນງານເປັນພື້ນຖານ

- ແຜນງານ (ຜພນພ) ໄດ້ສະແດງໃຫ້ເຫັນວ່າ ຄູ່ຮ່ວມພັດທະນາ ສາມາດນຳໃຊ້ **ລະບົບການດຳເນີນງານຂອງລັດຖະບານ** ເພື່ອຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ກັບພະນັກງານລັດ.
  - o ວຽກງານຄຸ້ມຄອງການເງິນຂອງລັດຖະບານ: ການກວດສອບບັນຊີອິດສະຫຼະ ສະແດງເຖິງຄວາມໂປ່ງໃສ ແລະ ສາມາດກວດສອບໄດ້
  - o ລະບົບການຕິດຕາມ ແລະ ປະເມີນຜົນ ສາມາດນຳໄປຈັດຕັ້ງປະຕິບັດ ໂດຍພະນັກງານຂັ້ນເມືອງ ທີ່ໄດ້ຮັບການຝຶກອົບຮົມມາແລ້ວ.
- ການຈັດຕັ້ງປະຕິບັດໂຄງການໂດຍ **ອຳນາດການປົກຄອງຂັ້ນເມືອງ** ແມ່ນ ກຸ້ມຄ່າ ແລະ ມີປະສິດທິຜົນ ດ້ານການບໍລິຫານ; ສາມາດປະສານສົມທົບ ລະຫວ່າງຂະແໜງການ ທີ່ເຮັດໃຫ້ເກີດຜົນແບບລວມສູນ.
- ແຜນງານ (ຜພນພ) ເຫັນໄດ້ **ຄວາມສະຫຼັບຊັບຊ້ອນ ທີ່ແຕກຕ່າງກັນ ດ້ານການຄຸ້ມຄອງການເງິນ ຂອງຄູ່ຮ່ວມພັດທະນາ.**
- ປະກົດວ່າ ຄູ່ຮ່ວມທະນາຕ່າງໆ **ບໍ່ໄດ້ໃຫ້ຄວາມສຳຄັນ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ໂດຍຖືເອົາແຜນງານເປັນພື້ນຖານ** ຢູ່ເຂດເນີນສູງ

# ການເບິ່ງໄປຂ້າງໜ້າ

## ແຜນງານ ແລະ ຍຸດທະສາດ ການຈັດຕັ້ງປະຕິບັດ ການພັດທະນາເຂດເນີນສູງ ເພື່ອບັນລຸ ເປົ້າໝາຍການພັດທະນາແບບຍືນຍົງ (SDGs)

- ຕ້ອງມີການປັບປຸງ ການປະສານງານ ທີ່**ນອກເໜືອຈາກວຽກງານກະສິກຳ** - ປະກອບດ້ວຍ ການວາງແຜນຂອງບ້ານ, ການພັດທະນາພື້ນຖານໂຄງລ່າງ, . ໂພຊະນາການ, ແລະອື່ນໆ.
- ແຜນງານ (ຜພນໝ) ໄດ້ກະກຽມໃນ**ການມີສ່ວນຮ່ວມ ແລະ ປຶກສາຫາລື ຢ່າງກວ້າງຂວາງ** ແລະ ໄດ້ຮັບການ ອະນຸມັດຈາກ ລັດຖະມົນຕີ ກະຊວງ ກະສິກຳ ແລະ ປ່າໄມ້.
- **ລັດຖະບານ ແລະ ບັນດາຄູ່ຮ່ວມພັດທະນາ (DPs) ມີຂະບວນການປຶກສາຫາລື ທີ່ກຳລັງດຳເນີນການຢູ່** ກ່ຽວກັບການລຶບລ້າງ ຄວາມທຸກຍາກ, ການຄ້ຳປະກັນ ດ້ານສະບຽງອາຫານ ແລະ ໂພຊະນາການ, ແລະ ການພັດທະນາ ເສດຖະກິດ-ສັງຄົມ ຢູ່ເຂດເນີນສູງ ໂດຍຜ່ານ ຂະບວນການຂອງ ກຸ່ມຂະແໜງການ ກະສິກຳ ແລະ ພັດທະນາຊົນນະບົດ (SWG-ARD)



# ການເບິ່ງໄປຂ້າງໜ້າ

## ແຜນງານ ແລະ ຍຸດທະສາດ ການຈັດຕັ້ງປະຕິບັດ ການພັດທະນາເຂດເນີນສູງ ເພື່ອບັນລຸ ເປົ້າໝາຍການພັດທະນາແບບຍືນຍົງ (SDGs)

- **ຕ້ອງການການນຳພາທີ່ເຂັ້ມແຂງ**, ການຊີ້ນຳຢ່າງຊັດແຈນ, ແລະ ການປຶກສາຫາລື ກັບຜູ້ນຳອາວຸໂສຢ່າງເປັນປົກກະຕິ.
- ກິດຈະກຳການພັດທະນາເຂດເນີນສູງຕ້ອງໄດ້ຮັບການ**ປະສານສົມທົບໂດຍ ລັດຖະບານ** ເພື່ອຮັບປະກັນຄວາມສອດຄ່ອງກັບນະໂຍບາຍຕ່າງໆທີ່ຕິດພັນ.
- ຄວາມຈຳເປັນທີ່ມີ **ຫ້ອງການປະສານງານ ລະຫວ່າງຂະແໜງການ** ສຳລັບວຽກງານເຂດເນີນສູງ ຢູ່ໃນກະຊວງກະສິກຳ ແລະ ປ່າໄມ້ ເພື່ອເປັນຈຸດປະສານງານລວມສູນ ຂອງກິດຈະກຳດ້ານການພັດທະນາເຂດເນີນສູງ
- ການຈັດຕັ້ງປະຕິບັດວຽກງານຂອງແຜນງານ (ຜພນໜ) ຕ້ອງມີກົນໄກ **ການປະສານງານ ຢູ່ຂັ້ນແຂວງ ແລະ ຂັ້ນເມືອງ.**



# ຂອບໃຈທີ່ ທ່ານໃຫ້ຄວາມສົນໃຈ

